ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ | ເລກທີ 0651 /ອຄ.ກຄພນ

ນະຄອນຫຼວງວຽງຈັນ, ວັນທີ 12 ມິຖຸນາ 2019

**ຄຳແນະນຳ**

**ກ່ຽວກັບການແກ້ໄຂບັນຫາຄົນຕ່າງປະເທດ ເຄື່ອນໄຫວດຳເນີນທຸລະກິດ ບໍ່ຖືກຕ້ອງຕາມລະບຽບກົດໝາຍ ຂອງ ສປປ ລາວ**

– ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 230/ນຍ, ລົງວັນທີ 24 ກໍລະກົດ 2017;

– ອີງຕາມ ຄຳສັ່ງຂອງທ່ານ ນາຍົກລັດຖະມົນຕີ ກ່ຽວກັບການອຳນວຍຄວາມສະດວກ ແລະ ໃຫ້ການຮ່ວມມືໃນການຂຶ້ນທະບຽນ ແລະ ອອກບັດອະນຸຍາດເຄື່ອນໄຫວຊົ່ວຄາວໃຫ້ຄົນຕ່າງປະເທດ ສະບັບເລກທີ 62/ນຍ, ລົງວັນທີ 13 ພະຈິກ 2015;

– ອີງຕາມ ມະຕິກອງປະຊຸມ ປຶກສາຫາລືແຜນສືບຕໍ່ແກ້ໄຂຄົນຕ່າງປະເທດທີ່ເຄື່ອນໄຫວບໍ່ຖືກຕ້ອງ ຕາມກົດໝາຍ ຂອງ ສປປ ລາວ ຄັ້ງວັນທີ 7-8 ມັງກອນ 2019.

ເພື່ອເຮັດໃຫ້ມີຄວາມເຂົ້າໃຈເປັນເອກະພາບກັນໃນຂອບເຂດທົ່ວປະເທດ ແລະ ສາມາດຈັດຕັ້ງປະຕິບັດໄດ້ຢ່າງມີປະສິດທິຜົນ ກ່ຽວກັບການແກ້ໄຂບັນຫາຄົນຕ່າງປະເທດ ດຳເນີນທຸລະກິດ ຢູ່ ສປປ ລາວ ທີ່ ບໍ່ຖືກຕ້ອງຕາມລະບຽບກົດໝາຍ ໂດຍສະເພາະແມ່ນການຈັດຕັ້ງປະຕິບັດ ຕາມທີ່ກຳນົດໃນຄຳສັ່ງຂອງທ່ານ ນາຍົກລັດຖະມົນຕີ ກ່ຽວກັບການອຳນວຍຄວາມສະດວກ ແລະ ໃຫ້ການຮ່ວມມືໃນການຂຶ້ນທະບຽນ ແລະ ອອກບັດອະນຸຍາດເຄື່ອນໄຫວຊົ່ວຄາວໃຫ້ຄົນຕ່າງປະເທດ ສະບັບເລກທີ 62/ນຍ, ລົງວັນທີ 13 ພະຈິກ 2015 ແລະ ຕາມມະຕິກອງປະຊຸມ ປຶກສາຫາລືແຜນສືບຕໍ່ແກ້ໄຂຄົນຕ່າງປະເທດທີ່ເຄື່ອນໄຫວບໍ່ຖືກຕ້ອງຕາມກົດໝາຍ ຂອງ ສປປ ລາວ ທີ່ຈັດຂຶ້ນໃນ ຄັ້ງວັນທີ 7-8 ມັງກອນ 2019 ຊຶ່ງໄດ້ມອບໃຫ້ຂະແໜງອຸດສາຫະກຳ ແລະ ການຄ້າ ເປັນເຈົ້າການຮັບຜິດຊອບແກ້ໄຂຄົນຕ່າງປະເທດ ທີ່ໄດ້ຂຶ້ນທະບຽນ ແລະ ໄດ້ອອກບັດເຄື່ອນໄຫວຊົ່ວຄາວແລ້ວ ໃນຈຳນວນ 10.208 ຄົນ ຫຼື ຜູ້ທີ່ລົງທຶນເພື່ອຄ້າຂາຍ, ສ້ອມແປງ, ດຳເນີນທຸລະກິດ, ການບໍລິການຮ້ານອາຫານ, ເຮືອນພັກ, ໂຮງແຮມ ແລະ ການລົງທຶນປະເພດອື່ນໆ ທີ່ຂັດກັບກົດໝາຍ ແລະ ລະບຽບການຂອງຂະແໜງການຂອງຕົນ ໂດຍສະເພາະແມ່ນບັນຊີປະເພດທຸລະກິດທີ່ສະຫງວນໄວ້ໃຫ້ພົນລະເມືອງລາວ, ສະບັບປັບປຸງ/ຄ 02-2015 ຂອງກະຊວງອຸດສາຫະກຳ ແລະ ການຄ້າ.

**ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກ ຄຳແນະນຳ ດັ່ງນີ້:**

**I. ການດຳເນີນທຸລະກິດ ຂອງຄົນຕ່າງປະເທດ ທີ່ດຳເນີນທຸລະກິດຢູ່ ສປປ ລາວ**

ສປປ ລາວ ສ້າງທຸກເງື່ອນໄຂ ເອື້ອອຳນວຍຄວາມສະດວກ ແລະ ສ້າງບັນຍາກາດ ແກ່ການດຶງດູດ ແລະ ສົ່ງເສີມການລົງທຶນ ຕ່າງປະເທດ ເພື່ອດຶງດູດເງິນທຶນ ແລະ ເຕັກໂນໂລຊີ ທີ່ທັນສະໄໝ ປະກອບສ່ວນໃນການ

ພັດທະນາເສດຖະກິດ-ສັງຄົມ ຂອງຊາດ ແຕ່ພ້ອມດຽວກັນນີ້ ກໍ່ໄດ້ກຳນົດນະໂຍບາຍ ເພື່ອປົກປ້ອງຜູ້ລົງທຶນພາຍໃນ ໂດຍໄດ້ກຳນົດປະເພດທຸລະກິດໃຫ້ຜູ້ລົງທຶນຕ່າງປະເທດ ສາມາດລົງທຶນໄດ້ ໂດຍມີເງື່ອນໄຂ ແລະ ກຳນົດບາງປະເພດທຸລະກິດຫ້າມ ສຳລັບຜູ້ລົງທຶນຕ່າງປະເທດຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013, ດັ່ງລາຍລະອຽດລຸ່ມນີ້:

**1. ປະເພດທຸລະກິດ ຄົນຕ່າງປະເທດ ສາມາດລົງທຶນໄດ້ ແຕ່ມີເງື່ອນໄຂ**

ປະເພດທຸລະກິດ ທີ່ຄົນຕ່າງປະເທດ ສາມາດລົງທຶນໄດ້ ແຕ່ມີເງື່ອນໄຂ ຫຼື ເອີ້ນວ່າ **ປະເພດທຸລະກິດ ທີ່ມີເງື່ອນໄຂສຳລັບຜູ້ລົງທຶນຕ່າງປະເທດ** ແມ່ນປະເພດທຸລະກິດທີ່ລັດຖະບານລາວ ບໍ່ໄດ້ຫ້າມຜູ້ລົງທຶນຕ່າງປະເທດດຳເນີນທຸລະກິດດັ່ງກ່າວ ແຕ່ມີເງື່ອນໄຂຈຳກັດ ເຊັ່ນ: ກຳນົດທຶນຈົດທະບຽນ ຫຼື ທຶນຂອງການລົງທຶນ ຕໍ່າສຸດ ຫຼື ສູງສຸດ; ຕ້ອງຮຸ້ນສ່ວນກັບຜູ້ລົງທຶນພາຍໃນ ແລະ ກຳນົດອັດຕາສ່ວນຮຸ້ນສູງສຸດ. ນອກນີ້ ຍັງມີເງື່ອນໄຂ ຈຳກັດອື່ນ ຕາມລະບຽບການ ຂອງແຕ່ລະຂະແໜງການ.

ປະເພດທຸລະກິດ ທີ່ຄົນຕ່າງປະເທດ ສາມາດລົງທຶນໄດ້ ແຕ່ມີເງື່ອນໄຂໃນຂົງເຂດການຄ້າ ແມ່ນໄດ້ກຳນົດໃນ ແຈ້ງການຂອງລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 1327/ອຄ.ທຄວ, ລົງວັນທີ 13 ກໍລະກົດ 2015. ແຈ້ງການສະບັບດັ່ງກ່າວ ໄດ້ກຳນົດ: ຂະແໜງການ, ປະເພດທຸລະກິດ, ທຶນຈົດທະບຽນ ແລະ ອັດຕາສ່ວນ ການຖືຮຸ້ນຂອງຜູ້ລົງທຶນຕ່າງປະເທດ ຄື: ບາງປະເພດທຸລະກິດ ກຳນົດທຶນຈົດທະບຽນ ຕໍ່າສຸດ ແລະ ສາມາດຖືຮຸ້ນໄດ້ສູງສຸດເທົ່າໃດ; ບາງປະເພດທຸລະກິດ ກຳນົດຂອບເຂດທຶນຈົດທະບຽນ ສາມາດຖືຮຸ້ນໄດ້ສູງສຸດເທົ່າໃດ ແລະ ມີທຶນຈົດທະບຽນ ແຕ່ເທົ່າໃດຂຶ້ນໄປ ສາມາດຖືຮຸ້ນໄດ້ 100%.

ນອກຈາກ ແຈ້ງການສະບັບເລກທີ 1327/ອຄ.ທຄວ, ລົງວັນທີ 13 ກໍລະກົດ 2015 ກ່ຽວກັບບັນຊີປະເພດທຸລະກິດມີເງື່ອນໄຂ ສຳລັບຜູ້ລົງທຶນຕ່າງປະເທດ(ສະບັບປັບປຸງ/ງ 02-2015) ແລ້ວ ຍັງມີນິຕິກຳອື່ນ ທີ່ກຳນົດກ່ຽວກັບເງື່ອນໄຂ ການລົງທຶນຂອງຜູ້ລົງທຶນຕ່າງປະເທດ ເຊັ່ນ: ຂໍ້ຕົກລົງຂອງລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ວ່າດ້ວຍການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍ; ຂໍ້ຕົກລົງ ຂອງລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ວ່າດ້ວຍສູນການຄ້າ ແລະ ຮ້ານສັບພະສິນຄ້າ. ຂໍ້ຕົກລົງ 2 ສະບັບນີ້ ໄດ້ກຳນົດກ່ຽວກັບເງື່ອນໄຂສຳລັບຜູ້ລົງທຶນຕ່າງປະເທດ ທີ່ລົງທຶນ ໃນປະເພດທຸລະກິດການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍ, ສູນການຄ້າ ແລະ ຮ້ານສັບພະສິນຄ້າ.

**2. ປະເພດທຸລະກິດ ຫ້າມສຳລັບຜູ້ລົງທຶນຕ່າງປະເທດ**

ປະເພດທຸລະກິດ ທີ່ຫ້າມສຳລັບຜູ້ລົງທຶນຕ່າງປະເທດ ແມ່ນປະເພດທຸລະກິດທີ່ສະຫງວນ ໄວ້ໃຫ້ພົນລະເມືອງລາວ ຊຶ່ງເປັນປະເພດທຸລະກິດທີ່ມີຄວາມສຳຄັນ ແລະ ຈຳເປັນ ສຳລັບປະຊາຊົນລາວບັນດາເຜົ່າ ໃນການປະກອບທຸລະກິດ, ສ້າງວຽກເຮັດງານທຳ, ສ້າງລາຍໄດ້ໃຫ້ມີຄວາມໝັ້ນຄົງ ແກ້ໄຂຊີວິດການເປັນຢູ່ໃຫ້ດີຂຶ້ນ ແລະ ປະເພດທຸລະກິດທີ່ບໍ່ຈຳເປັນຕ້ອງ ໃຊ້ເຕັກນິກວິຊາການ ຫຼື ເຕັກໂນໂລຊີສູງ ແລະ ບໍ່ຕ້ອງການລົງທຶນສູງ.

ປະເພດທຸລະກິດ ສະຫງວນໄວ້ໃຫ້ພົນລະເມືອງລາວ ໄດ້ກຳນົດໃນແຈ້ງການຂອງລັດຖະມົນຕີຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 1328/ອຄ.ທຄວ, ລົງວັນທີ 13 ກໍລະກົດ 2015. ແຈ້ງການ ສະບັບດັ່ງກ່າວໄດ້ກຳນົດ: ຂະແໜງການ, ປະເພດທຸລະກິດທີ່ສະຫງວນໄວ້ໃຫ້ພົນລະເມືອງລາວ ແລະ ພາກສ່ວນຮັບຜິດຊອບຕາມບັນຊີ ຄ 02-2015 ບັນຊີປະເພດທຸລະກິດສະຫງວນໄວ້ສຳລັບພົນລະເມືອງລາວ (ສະບັບປັບປຸງ).

ນອກຈາກປະເພດທຸລະກິດ ທີ່ກຳນົດເປັນປະເພດທຸລະກິດ ສຳລັບຜູ້ລົງທຶນຕ່າງປະເທດ ສາມາດລົງທຶນໄດ້ ໂດຍມີເງື່ອນໄຂ ແລະ ປະເພດທຸລະກິດ ຫ້າມສຳລັບຜູ້ລົງທຶນຕ່າງປະເທດ ຕາມທີ່ໄດ້ແນະນຳ ໃນ ຂໍ້ 1 ແລະ 2

ໂລແມງ I ຂອງຄຳແນະນຳສະບັບນີ້ ປະເພດທຸລະກິດອື່ນໆ ແມ່ນ ສາມາດລົງທຶນໄດ້ 100% ແຕ່ຕ້ອງປະຕິບັດ ໂດຍຖືກຕ້ອງຕາມ ທີ່ກຳນົດໃນກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ ໄດ້ວາງອອກ ໃນແຕ່ລະໄລຍະ.

**II. ການດຳເນີນທຸລະກິດ ຂອງຜູ້ລົງທຶນຕ່າງປະເທດ ທີ່ບໍ່ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ.**

ການດຳເນີນທຸລະກິດ ຂອງຜູ້ລົງທຶນຕ່າງປະເທດ ທີ່ບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ ແມ່ນ ໝາຍເຖິງຜູ້ລົງທຶນຕ່າງປະເທດ ທີ່ດຳເນີນທຸລະກິດທີ່ບໍ່ໄດ້ຮັບອະນຸຍາດ, ບໍ່ມີໃບທະບຽນວິສາຫະກິດ, ລະເມີດໃບທະບຽນວິສາຫະກິດ ທັງປະຕິບັດບໍ່ຖືກຕ້ອງຕາມເງື່ອນໄຂ ສຳລັບປະເພດທຸລະກິດ ທີ່ຜູ້ລົງທຶນຕ່າງປະເທດ ສາມາດລົງທຶນໄດ້ ແຕ່ມີເງື່ອນໄຂ ຫຼື ດຳເນີນທຸລະກິດ ປະເພດທຸລະກິດ ທີ່ຫ້າມສຳລັບຜູ້ລົງທຶນຕ່າງປະເທດ ຫຼື ເຄື່ອນໄຫວດຳເນີນທຸລະກິດ ທີ່ບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ທີ່ລັດຖະບານ ແຫ່ງ ສປປ ລາວ ໄດ້ວາງອອກໃນແຕ່ລະໄລຍະ.

**III. ມາດຕະການຈັດຕັ້ງປະຕິບັດ**

ການດຳເນີນທຸລະກິດ ຂອງຜູ້ລົງທຶນຕ່າງປະເທດ ທີ່ບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ ຕາມທີ່ແນະນຳໃນ ໂລແມງ II ຂອງຄຳແນະນຳສະບັບນີ້ ຕ້ອງໄດ້ຮັບການແກ້ໄຂໂດຍໄວ ຕາມຄຳສັ່ງຂອງທ່ານ ນາຍົກລັດຖະມົນຕີ ເລກທີ 62/ນຍ, ລົງວັນທີ 13 ພະຈິກ 2015 ແລະ ຕາມມະຕິກອງປະຊຸມ ປຶກສາຫາລືແຜນສືບຕໍ່ ແກ້ໄຂຄົນຕ່າງປະເທດທີ່ເຄື່ອນໄຫວບໍ່ຖືກຕ້ອງຕາມກົດໝາຍ ຂອງ ສປປ ລາວ ທີ່ຈັດຂຶ້ນໃນ ຄັ້ງວັນທີ 7-8 ມັງກອນ 2019 ຊຶ່ງສະເພາະຂະແໜງອຸດສາຫະກຳ ແລະ ການຄ້າ ແມ່ນໃຫ້ປະຕິບັດ ດັ່ງນີ້:

1. ໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ແຕ່ງຕັ້ງເຈົ້າໜ້າທີ່ກວດກາການຄ້າສົມທົບກັບເຈົ້າໜ້າທີ່ທະບຽນວິສາຫະກິດ ລົງສົມທົບກັບເຈົ້າໜ້າທີ່ກວດກາການຄ້າ ແລະ ເຈົ້າໜ້າທີ່ທະບຽນ ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ນະຄອນ ລົງກວດກາ ຄົນຕ່າງປະເທດທີ່ດຳເນີນທຸລະກິດ ການຜະລິດ, ການຄ້າ, ການບໍລິການ ຕາມບັນຊີ ທີ່ຂະແໜງແຮງງານ ແລະ ສະຫວັດດີການສັງຄົມ, ຂະແໜງປ້ອງກັນ ຄວາມສະຫງົບ ໄດ້ສັງລວມຜ່ານມານັ້ນ ຢູ່ແຂວງ, ນະຄອນຫຼວງ ຂອງຕົນ ເພື່ອກວດຄືນໃຫ້ລະອຽດຊັດເຈນ ໂດຍບັນທຶກລະອຽດ ແລະ ນຳໃຊ້ມາດຕະການ ເພື່ອແກ້ໄຂ ຄືດັ່ງນີ້:

1.1 ການດຳເນີນທຸລະກິດໂດຍບໍ່ຂຶ້ນທະບຽນວິສາຫະກິດ ຫຼື ບໍ່ມີໃບອະນຸຍາດດຳເນີນທຸລະກິດ ຕາມ ທີ່ໄດ້ກຳນົດໄວ້ໃນ ຂໍ້ຕົກລົງ 0044/ອຄ.ກທຄວ, ລົງວັນທີ 18 ມັງກອນ 2019 ວ່າດ້ວຍຮັບຮອງກິດຈະການອຸດສາຫະກຳ ແລະ ການຄ້າ ທີ່ຕ້ອງອອກໃບອະນຸຍາດດຳເນີນທຸລະກິດ ແມ່ນ ໃຫ້ປັບໃໝ ສິບ ລ້ານ ກີບ (10.000.000 ກີບ) ແລະ ໃຫ້ໂຈະການເຄື່ອນໄຫວທຸລະກິດດັ່ງກ່າວ. ພ້ອມນີ້ກໍ່ໃຫ້ເຮັດບົດບັນທຶກ ໂດຍແນະນຳໃຫ້ ໄປແຈ້ງຂຶ້ນທະບຽນວິສາຫະກິດ ແລະ ຂໍອະນຸຍາດດຳເນີນທຸລະກິດ ຕາມລະບຽບການທີ່ກ່ຽວຂ້ອງ ໃຫ້ສຳເລັດພາຍໃນ 90 ວັນ. ພາຍຫຼັງ ໄດ້ໃບທະບຽນວິສາຫະກິດ ແລະ ໄດ້ຮັບໃບອະນຸຍາດກ່ຽວຂ້ອງ ຄົບຖ້ວນແລ້ວ ຈຶ່ງສາມາດເຄື່ອນໄຫວໄດ້. ຖ້າພາຍໃນ 90 ວັນ ຍັງບໍ່ໄດ້ໄປຂຶ້ນທະບຽນວິສາຫະກິດ ແມ່ນ ໃຫ້ປັບໃໝຕື່ມ ສິບລ້ານກີບ (10.000.000 ກີບ) ແລະ ໃຫ້ຍຸບເລີກຖາວອນ ພ້ອມທັງສົ່ງຂໍ້ມູນລະອຽດ ໃຫ້ຂະແໜງແຮງງານ ແລະ ສະຫວັດດີການສັງຄົມ, ຂະແໜງປ້ອງກັນຄວາມສະຫງົບ ເພື່ອນຳໃຊ້ມາດຕະການ ສົ່ງພວກກ່ຽວກັບຄືນປະເທດ;

1.2 ການດຳເນີນທຸລະກິດໂດຍບໍ່ຖືກວັດຖຸປະສົງຂອງວິສາຫະກິດຕົນ ແມ່ນ ໃຫ້ສຶກສາອົບຮົມ ພ້ອມທັງປັບໃໝ ສາມລ້ານກີບ (3.000.000ກີບ) ພ້ອມນີ້ ກໍ່ໃຫ້ເຮັດບົດບັນທຶກ ໂດຍແນະນຳໃຫ້

ເຄື່ອນໄຫວຖືກຕ້ອງຕາມວັດຖຸປະສົງ, ຖ້າຕ້ອງການເຄື່ອນໄຫວນອກຈາກວັດຖຸປະສົງທີ່ໄດ້ຮັບອະນຸຍາດ ຕ້ອງປ່ຽນແປງໃບທະບຽນວິສາຫະກິດ ຫຼື ຂໍອະນຸຍາດດໍາເນີນທຸລະກິດ ຕາມຂໍ້ຕົກລົງຂອງລັດຖະມົນຕີກະຊວງອຸດສາຫະກໍາ ແລະ ການຄ້າ ສະບັບເລກທີ 0023/ອຄ.ກທຄວ, ລົງວັນທີ 9 ມັງກອນ 2019 ຈຶ່ງສາມາດເຄື່ອນໄຫວໄດ້. ຖ້າຍັງບໍ່ປັບປຸງແກ້ໄຂ ກວດພົບຄັ້ງທີ 2 ແມ່ນໃຫ້ປັບໃໝອີກ ຫ້າລ້ານກີບ (5.000.000 ກີບ) ແລະ ໃຫ້ຍຸບເລີກຖາວອນ ພ້ອມທັງສົ່ງຂໍ້ມູນລະອຽດ ໃຫ້ຂະແໜງແຮງງານ ແລະ ສະຫວັດດີການສັງຄົມ, ຂະແໜງປ້ອງກັນຄວາມສະຫງົບ ເພື່ອນໍາໃຊ້ມາດຕະການ ສົ່ງພວກກ່ຽວກັບຄືນປະເທດ;

1.3 ການນໍາໃຊ້ທະບຽນຂອງຄົນອື່ນ ດໍາເນີນທຸລະກິດ ແມ່ນໃຫ້ປະຕິບັດມາດຕະການ ຄືກັນກັບການນໍາໃຊ້ມາດຕະການ ຕໍ່ຜູ້ທີ່ບໍ່ມີທະບຽນວິສາຫະກິດ ຕາມທີ່ກໍານົດໃນ ຂໍ້ 1.1 ໂລແມງ III ຂອງຄໍາແນະນໍາ ສະບັບນີ້;

1.4 ການເຄື່ອນໄຫວ ບໍ່ຖືກຕ້ອງຕາມເງື່ອນໄຂ ສໍາລັບປະເພດທຸລະກິດ ທີ່ຄົນຕ່າງປະເທດສາມາດລົງ ທຶນໄດ້ແຕ່ມີເງື່ອນໄຂ ແມ່ນໃຫ້ປະຕິບັດມາດຕະການ ຄືກັນກັບການນໍາໃຊ້ມາດຕະການ ຕໍ່ຜູ້ທີ່ດໍາເນີນທຸລະກິດ ໂດຍບໍ່ຖືກວັດຖຸປະສົງຂອງວິສາຫະກິດຕົນ ຕາມທີ່ກໍານົດໃນ ຂໍ້ 1.2 ໂລແມງ III ຂອງຄໍາແນະນໍາ ສະບັບນີ້;

1.5 ການດໍາເນີນທຸລະກິດ ທີ່ຫ້າມສໍາລັບຜູ້ລົງທຶນຕ່າງປະເທດ ແມ່ນ ໃຫ້ເຮັດບົດບັນທຶກ ເອົາຂໍ້ມູນລະອຽດ ສົ່ງໃຫ້ຂະແໜງແຮງງານ ແລະ ສະຫວັດດີການສັງຄົມ, ຂະແໜງປ້ອງກັນຄວາມສະຫງົບ ເພື່ອນໍາໃຊ້ມາດຕະການ ສົ່ງພວກກ່ຽວກັບຄືນປະເທດ;

1.6 ຜູ້ໃຫ້ຄົນຕ່າງປະເທດເຊົ່າສະຖານທີ່ດໍາເນີນທຸລະກິດ ໂດຍບໍ່ໄດ້ຮັບອະນຸຍາດ ແມ່ນໃຫ້ມີມາດຕະການທາງວິໄນ ແລະ ດໍາເນີນຄະດີ ຕາມກົດໝາຍ ແລະ ລະບຽບການ ຕາມທີ່ໄດ້ກໍານົດໄວ້ໃນ ຂໍ້ 6 ຄໍາສັ່ງ ຂອງນາຍົກລັດຖະມົນຕີ ວ່າດ້ວຍການອໍານວຍຄວາມສະດວກ ແລະ ໃຫ້ການຮ່ວມມື ໃນການຂຶ້ນທະບຽນ ແລະ ອອກບັດອະນຸຍາດເຄື່ອນໄຫວຊົ່ວຄາວ ໃຫ້ຄົນຕ່າງປະເທດ ສະບັບເລກທີ 62/ນຍ, ລົງວັນທີ 13/11/2015.

2. ໃຫ້ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ທົ່ວປະເທດ ຮີບຮ້ອນສົມທົບກັບຫ້ອງການອຸດສາຫະກໍາ ແລະ ການຄ້າ ເມືອງ, ນະຄອນ ລົງກວດກາ, ເກັບກໍາຂໍ້ມູນ ພ້ອມທັງນໍາໃຊ້ມາດຕະການຕາມຄໍາແນະນໍາສະບັບນີ້ ໂດຍຈັດຕັ້ງປະຕິບັດໃຫ້ສໍາເລັດ ແລະ ສົ່ງບົດລາຍງານ ໃຫ້ກົມການຄ້າພາຍໃນ, ພາຍໃນ 135 ວັນ ນັບແຕ່ວັນ ປະກາດໃຊ້ຄໍາແນະນໍາ ສະບັບນີ້ ເພື່ອສັງລວມຂໍ້ມູນທົ່ວປະເທດ ລາຍງານລັດຖະບານ ແລະ ນໍາສະເໜີພາກສ່ວນກ່ຽວຂ້ອງ ເພື່ອສົມທົບກັນສືບຕໍ່ແກ້ໄຂ.

3. ມອບໃຫ້ກົມການຄ້າພາຍໃນ ດໍາເນີນການເຜີຍແຜ່ແນະນໍາ ຄໍາແນະນໍາສະບັບນີ້ ໃຫ້ບັນດາພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ໃນທົ່ວປະເທດ ໃຫ້ເຂົ້າໃຈລະອຽດຈະແຈ້ງ ແລ້ວນໍາໄປຈັດຕັ້ງປະຕິບັດໃຫ້ສໍາເລັດ ຕາມກໍານົດເວລາ ທີ່ກໍານົດໃນ ຂໍ້ 2 ໂລແມງ III ຂອງຄໍາແນະນໍາ ສະບັບນີ້.

4. ຄໍາແນະນໍາ ສະບັບນີ້ມີຜົນສັກສິດ ພາຍຫຼັງລົງລາຍເຊັນ ແລະ ພິມລົງຈົດໝາຍເຫດທາງລັດຖະການສິບຫ້າວັນ (15) ວັນ.

ລັດຖະມົນຕີ

ບ ເຂັມມະນີ ພົນເສນາ